ໂຄງການການສຶກສາເພື່ອຊ່ວຍຕົນເອງ

ຄວາມຮູ້ທ້ອງຖິ່ນ

# ສາຍນ້ຳຕົງ

( ສະບັບທົດລອງໃຊ້ )



ຂໍ້ມູນຈາກບ້ານດອນ

ເມືອງເຟືອງ, ແຂວງວຽງຈັນ

ຂຽນໂດຍ: ອຈ ບົວພັນ ປະສວຍຄໍາ

2007

## ຄວາມຮູ້ທ້ອງຖິ່ນ

# "ສາຍນ້ຳຕົງ"


ຂໍ້ມູນຈາກ: ບ້ານດອນ ເມືອງເຟືອງ,
ແຂວງວຽງຈັນ

ຂຽນໂດຍ: **ອ.ຈ ບົວພັນ ປະລວຍຄຳ**

ຮຽບຮຽງໂດຍ: **ອ.ຈ ບຸນທົງ**
**ອ.ຈ ຂວັນແກ້ວ**
**ອ.ຈ ໂພໄຊ**

ພິມແລະຈັດໜ້າໂດຍ: **ນ. ສຸກັນຍາ ສີວິໄຊ**

ແຕ້ມໂດຍ: **ທ. ໄຕ່ ແກ້ວວົງສາ**



ເຈົ້າຂອງ: ຫ້ອງການສຶກສາເມືອງເຟືອງ, ແຂວງ
ວຽງຈັນແລະສູນອົບຮົມຮ່ວມພັດທະນາ

ອຸປະຖຳໂດຍ:

New Zealand Agency for International
Development ( NZAID )

# ຄຳນຳ

ປຶ້ມເຫລັ້ມນີ້ເປັນຜົນງານການຂຽນ ແລະ ໃຫ້ຂໍ້ມູນຂອງຄູອາຈານແລະຊາວບ້ານດອນ ເມືອງເພືອງ ແຂວງວຽງຈັນ ຊຶ່ງເປັນການຮິບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກຸ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດົນນານຈົນເຖິງປະຈຸບັນນີ້.

ປຶ້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປຶ້ມເຫລັ້ມນີ້ຊຶ່ງເປັນສະບັບທົດລອງໃຊ້ ແລະ ຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກພ້ອມກັນນັ້ນຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປ່ຽນແປງຕາມຄວາມເໝາະສົມ.

**ຄະນະຈັດທຳ**

## ຄວາມເປັນມາ
## ບ່ອນກຳເນີດຂອງສາຍນ້ຳຕົງ

ນ້ຳຕົງກຳເນີດມາຈາກຮ່ອມພູເຍີຍເຊິ່ງເປັນສາຍນ້ຳທີ່ໄຫລແຕ່ທາງໃຕ້ຂຶ້ນມາທາງເໜືອ; ມີຄວາມຍາວປະມານ 50 ກິໂລແມັດ ໄຫລຜ່ານບ້ານນາອ່າງແລະປ່ອງໃສ່ນ້ຳຫລັກຢູ່ທີ່ ບ້ານເມືອງເຟືອງ.

ປະຊາຊົນສ່ວນຫລາຍໄດ້ຕັ້ງຖິ່ນຖານຢູ່ບໍລິເວນແຄມນ້ຳຕົງອາໄສນ້ຳຕົງເປັນບ່ອນທຳມາຫາກິນແລະ ຊົມໃຊ້ປະໂຫຍດຕ່າງໆ

ປະຈຸບັນນີ້ນ້ຳຕົງເປັນສາຍນ້ຳທີ່ປະຊາຊົນໃຊ້ປະໂຫຍດເຂົ້າໃນການຜະລິດກະສິກຳໂດຍສະເພາະໄດ້ເຮັດຝາຍກັ້ນເພື່ອເອົານ້ຳເຂົ້ານາເຮັດໃຫ້ຊາວບ້ານສາມາດເຮັດນາເພື່ອທີ່ຈະສາມາດເຮັດນາໄດ້ທັງສອງລະດູຄື: ນາແຊງ ແລະ ນາປີ

**ຄຳຖາມ:**

1. ນ້ຳຕົງກຳເນີດມາຈາກສາຍພູຫຍັງ ?
2. ສາຍນ້ຳຕົງມີຄວາມຍາວປະມານເທົ່າໃດ ?
3. ນ້ຳຕົງມີຄຸນປະໂຫຍດຫຍັງແດ່ກັບປະຊາຊົນ ?

**ວິຊາ: ໂລກອ້ອມຕົວ**

**ຫົວບົດ: ຫາດແລະວັງຂອງສາຍນ້ຳຕົງ**

ສາຍນ້ຳຕົງເປັນແມ່ນ້ຳທີ່ໄຫລຜ່ານແຕ່ໃຕ້ຂຶ້ນເໜືອ, ໄຫລປ່ອງໃສ່ນ້ຳລຶກຢູ່ທີ່ບ້ານເມືອງເພືອງ.

ນ້ຳຕົງມີຫລາຍຫາດເຊິ່ງເພິ່ນໄດ້ຕັ້ງຊື່ຂອງຫາດ ແລະ ວັງນ້ຳຕ່າງໆມີດັ່ງນີ້: ຫາດລັງຫາດ, ຫາດຫີນຊາ, ຫາດທ່າປີງ, ວັງແກ່ວນາກ, ຫາດຫີນຄຳ, ວັງຫີນໃຫ່ງ່ນ, ວັງຫີນກາບ, ວັງຂີ້ຊ້າງ, ວັງຕາແດງ, ວັງໄມ້ຂາ, ວັງມົນ, ວັງປາຈາດ, ວັງປາກປູນ, ວັງຫີນບໍ່ ແລະ ອີກຫລາຍໆຫາດທີ່ມີ

ເວົ້າລວມແລ້ວຊື່ຂອງວັງນ້ຳທຸກວັງ ແລະ ຫາດທຸກໆຫາດໃນສາຍນ້ຳຕົງແມ່ນມີຄວາມໝາຍ ແລະ ປະຫວັດຄວາມເປັນມາຕາມຄວາມເຊື່ອຂອງປະຊາຊົນທີ່ໄດ້ຕັ້ງຖິ່ນຖານມາແຕ່ປາງກ່ອນແລ້ວ

**ຄຳຖາມ:**

1. ນ້ຳຕົງໄຫລປ່ອງໃສ່ນ້ຳລຶກຢູ່ບ້ານຫຍັງ ?

2. ຈົ່ງເວົ້າຊື່ຫາດແລະວັງຢູ່ໃນສາຍນ້ຳຕົງມາເບິ່ງວ່າມີຫຍັງແດ່ ?

## ແຜນວາດນ້ຳຕົງ




ເຂດບ້ານຕ່າງໆທີ່ນ້ຳຕົງໄຫລ
ຜ່ານຢູ່ເຂດເມືອງເຟືອງ

## ກາບ : ສາຍນ້ຳຕົງ

ນ້ຳຕົງໃສ ໄຫລຜ່ານຮ່ອມຜາ
ມີປູປາ ຊຸມແຊວຫວັ່ນໄຫວ
ຈົ່ງຮ່ວມໃຈ ຮັກສາແມ່ນ້ຳ
ງາມເລີດລ້ຳ ນ້ຳຕົງສາຍນີ້
ແມ່ນ້ຳນີ້ ໄຫລຜ່ານຫລາຍທ່າ
ຄົນກາຍມາ ແວ່ສວ່າຍແວ່ອາບ
ມີບໍ່ຂາດ ທັງຄົນທັງປາ
ຮ່ວມຮັກສາ ແມ່ນ້ຳຕົງໄວ້
ແລະຢ່າໃຫ້ ໃຜມາທຳລາຍ

ແຕ່ງໂດຍ: ນາງ ທ່ອບປີ່



## ເພງ: ນ້ຳຕົງ

✱ ນ້ຳຕົງສາຍນີ້ ປຽບເໝືອນສາຍໃຈ
ສາຍນ້ຳເຢັນໃສ ຊຶມໃຊ້ທຸກຄືນທຸກວັນ
ຊັດສືນຈືນໃຈ ລົງໄປອາບນ້ຳເຢັນໃສ
ຄວາມທຸກ ຄວາມໂສກຫາຍໄປ
ສົດໃສ ເຂົ້າມາແທນທີ່
✱ໂອ! ສາຍນ້ຳ ສາຍໃຈນີ້ເອີຍ
ນ້ອງນີ້ບໍ່ເຄີຍ ຈະຫລົງລືມເຈົ້າໄດ້
ເຖິງຢູ່ຫ່າງໄກ ຈິດໃຈຄະນຶງຄິດເຖິງ
ຕອນອາບ ແລະລົງຫາປາ
ນັ້ນລະໜາ ເປັນທີ່ຝັງໃຈ



**ວິຊາ: ຄະນິດສາດ ( ສຳລັບປ.2 )**

ພໍ່ຕູ້ບາລີໄປໃສ່ໄຊຢູ່ນ້ຳຕົງ, ໃນມື້ທີ່ໜຶ່ງເພິ່ນເອົາໄຊໄປໃສ່ 2 ອັນໄດ້ປາຄໍ່ 8 ກິໂລກຼາມ, ເພິ່ນເຫັນວ່າການໃສ່ໄຊໄດ້ປາຫລາຍດັ່ງນັ້ນໃນມື້ທີ 2ເພິ່ນຈຶ່ງສານໄຊໄປໃສ່ຕື່ມອີກ 2 ອັນ, ດັ່ງນັ້ນເຮັດໃຫ້ມື້ທີ2 ນີ້ພໍ່ຕູ້ບາລີໄດ້ປາຄໍ່ຫລາຍກວ່າມື້ທີໜຶ່ງ 5 ກິໂລກຼາມ, ຖາມວ່າ

1. ໄຊທັງໝົດມີເທົ່າໃດ ?

**ສຳລັບປ.3**

2. ປາຄໍ່ມື້ທີສອງມີຈັກກິໂລກຼາມ ?

❖ **ຖ້າເປັນປ.4**

ພໍ່ຕູ້ບາລີເອົາປາໄປຂາຍໃນມື້ທີ່ 1 ຂາຍໄດ້ 4 ກິໂລ, ກິໂລລະ 20.000 ກີບ

- ມື້ທີ 2 ຂາຍໄດ້ 10 ກິໂລ. ກິໂລລະ 22.000 ກີບ

ຖາມວ່າມື້ທີໜຶ່ງໄດ້ເງິນຈັກກີບ ?

- ມື້ທີສອງເດໄດ້ເງິນຈັກກີບ ?



## ວິຊາ: ພາສາລາວ

ຫົວບົດ: " ຊ່ວຍພໍ່ຫາປາ "

ຫລັງຈາກເລີກໂຮງຮຽນເມື່ອຮອດເຮືອນທ້າວບຸນສີກໍປ່ຽນເຄື່ອງນຸ່ງເພື່ອຈະກຽມໄປ ໃສ່ມອງນຳພໍ່.

ທ້າວ ບຸນສີກໍເອົາມອງໃສ່ຖົງພາຍຍ່າງຕາມຫລັງພໍ່ຂອງລາວໄປ, ເມື່ອຮອດແຄມນ້ຳຕົງ, ພໍ່ຂອງທ້າວບຸນສີກໍເອົາມອງລົງໃສ່ຕາມແຄມຝັ່ງ, ບ່ອນນ້ຳເວີນແລະມີກ້ອນຫີນເມື່ອເອົາມອງລົງແລ້ວພໍ່ກໍບອກທ້າວບຸນສີໃຫ້ເບິ່ງຕາມບ່ອນມອງທີ່ພໍ່ຂອງລາວໄດ້ໃສ່ນັ້ນ,ຖ້າວ່າເຫັນປາຖືກມອງໃຫ້ຮ້ອງບອກພໍ່ລາວໂລດ, ສ່ວນພໍ່ລາວກໍເອົາໄມ້ໄລ່ປາທັ່ງຕາມກ້ອງໂງ່ນຫີນ

ເມື່ອໄດ້ປາພໍກຸ້ມກິນແລ້ວ; ພໍ່ ແລະ ທ້າວບຸນສີກໍກັບເມືອເຮືອນດ້ວຍຄວາມດີໃຈ

<u>ແປສັບ:</u>

1. ນ້ຳເວີນ: ນ້ຳໄຫຼວົນວຽນຢູ່ບ່ອນເກົ່າ

<u>ຄຳຖາມ:</u>

1. ຫຼັງຈາກທ້າວ ບຸນສີເລີກຮຽນແລ້ວລາວໄປໃສ?

## ການຫາປາໃນຮູບແບບຕ່າງໆ
## ຢູ່ບໍລິເວນນ້ຳຕົງ



ການຫາປາດ້ວຍການຫວ່ານແຫ



ການຫາປາດ້ວຍການສ້ອນປາ

## ວິຊາ: ໂລກອ້ອມຕົວ
## ຫົວບົດ: ປາທີ່ມີຢູ່ໃນນ້ຳຕົງ

ນ້ຳຕົງສາຍນີ້ມີຄວາມຍາວປະມານ 50 ກິໂລແມັດ, ໃນແມ່ນ້ຳຕົງແມ່ນມີປາອາໄສຢູ່ຫລາຍປະເພດ ເຊັ່ນ: ປາກົດ, ປາຂີງ, ປາຫລາດ, ປາໄນ, ປາຈາດ, ປາຄີລານ, ປາໜ້າໝອງ, ປາເປົ້າ, ປານຸດແລະປາເກັດທົ່ວໄປ

ນອກຈາກນັ້ນໃນນ້ຳຕົງຍັງມີປູ, ກຸ້ງ, ຫອຍ ແລະອື່ນໆອີກທີ່ອາໄສຢູ່ແມ່ນ້ຳສາຍນີ້

ສຳລັບຫອຍທີ່ມີຢູ່ຫລາຍແມ່ນ: ຫອຍກີ້ ແລະຫອຍຈານ.



## ເຊີ້ງ: ມາຮັກສານ້ຳຕົງ

ໂຮ.............................ຮື້ວ ( 3 )

ເອີ້ນມາເຮົາມາ ມາຮ່ວມໃຈກັນ
ມາຮ່ວມສຳພັນ ຮັກສາແມ່ນ້ຳ
ເຮັດໃຫ້ສອງກ້ຳ ນ້ຳຕົງສະອາດ
ທັງນ້ຳທັງຫາດ ບໍ່ໃຫ້ເປິເປື້ອນ
ຂໍເຊີນພວກເພື່ອນ ມາຮ່ວມແຮງໃຈ
ເຮັດໃຫ້ນ້ຳໃສ ແຄມນ້ຳສະອາດ
ນ້ຳໄຫລບໍ່ຂາດ ມີທັງຝູງປາ
ເປັນແຫລ່ງທຳມາ ຫາກິນຊາວບ້ານ
ຮີບມາຢ່າຄ້ານ ເພື່ອສາຍນ້ຳເຮົາ
ໃຫ້ເປັນບ່ອນເຕົ້າ ແຂກທ່ຽວແຂກຊົມ
ມາປຸກລະດົມ ບຳກັນພວກພີ່
ເຮົາສາມັກຄີ ບຳກັນຈຶ່ງໄດ້ ( 2 )

ໂຮ.............................ຮື້ວ ( 3 )



## ເຊີ້ງ: " ແຂ່ງຂັນສ້ອນປາແຫລ້ວ "

ໂຮ.........................ຮິ້ວ ( 3 )

ເອີຍໝູ່ເອີຍໝູ່ ໄປສ້ອນເດີໝູ່

ເຮົາມຸ່ງໜ້າສູ່ ນ້ຳຕົງໃສງາມ

ຫລາຍຄົນພັດຖາມ ໄປສ້ອນຫຍັງນໍ

ທຸກຄົນຂານຕໍ່ ປາແຫລ້ວປາຫລິດ

ມັນຢູ່ຕາມຄິດ ຂີ້ຕົມໃບໄຜ່

ມີແຕ່ໂຕໃຫຍ່ ເອົາຫວິງດີໆ

ຈົ່ງຕົນງົ່ມດີ ຢ່າໃຫ້ມັນພາດ

ໃຜບໍ່ລະຫລາດ ບໍ່ໄດ້ເຕັມໜອງ( ຂ້ອງ )

ແລ້ວຢ່າມາຫວງ ປັນເອົານຳໝູ່

ຍ້ອນໂຕບໍ່ຮູ້ ບໍ່ຮຽນນຳໃຜ

ເຮົາຕ້ອງຮ່ວມໃຈ ໄປສ້ອນປາແຫລ້ວ ( 2 )

ໂຮ.......................................ຮິ້ວ ( 3 )

ໝາຍເຫດ: ປາແຫລ້ວ ແມ່ນສັບທ້ອງຖິ່ນ : ປາຫລິດ

ໜອງ : ແມ່ນສັບທ້ອງຖິ່ນ : ຂ້ອງ

## ຂັບພວນ: " ເຊີນທ່ຽວຫາດນ້ຳຕຶງ "

* ໂອນໍ ຮຽນຂໍວາຈາເອີ້ນ ເຊີນຊວນເດີຊຸມທ່ານ
พາລູກຫລານ ທ່ຽວຫລິ້ນ
ນ້ຳຕຶງນີ້ ໃຫ້ມ່ວນຍິນເດີທ່ານເອີຍ
* ໂອນໍ ເຊີນທ່ານໄປທ່ຽວແທ້ ທັງຫາດຫີນຊາ
ຫາດທ່າປີງມີຫລາຍ ທ່າເອີນວັງກວ້າງ
ມີວັງຫລວງວັງຂີ້ຊ້າງ ວັງຕາແດງວັງປາຈາດ
ວັງຫີນກາບອ່ານັ້ນ ກໍມີແທ້ດັ່ງດຽວເດີເຈົ້າເອີຍ
* ແມ່ນວ່າການທ່ຽວວັງຫາດນັ້ນຕ້ອງເພີ່ມຕື່ມລະວັງຕົວ
ຢ່າໄດ້ມົວເມົາເພີນ ຫລິ້ນກິນເກີນແທ້
ໃຫ້ຫລຽວແລທາງນ້ຳ ລຳທານບ່ອນເລິກແດ່
ຈັກໜ່ອຍຈົມຈຸ່ມນ້ຳ ພັດທາເລື່ອງໃສ່ກັນບໍ່ເປັນບໍ
* ໂອນໍ ພໍແຕ່ມາເຖິງນີ້ ລຳພວນຊິໂຄ້ງຕ່າວ
ຂໍໃຫ້ຊາວພີ່ນ້ອງ ສະບາຍບ້າງຄູ່ຊູ່ຄົນເດີເຈົ້າເອີຍ
ລາລົງທໍ່ນີ້ນາ

